ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ເລກທີ 3561/ຫກ
ນະຄອນຫຼວງວຽງຈັນ, ວັນທີ 18/09/ 2026

ໜັງສືແຈ້ງເຊີນປະມູນ

1. ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ໃນນາມຕາງໜ້າຄະນະຮັບຜິດຊອບ ຈັດຊື້ເຄື່ອງຮັບໃຊ້ວິຊາສະເພາະຂອງກະຊວງ ອຸດສະຫະກຳ ແລະ ການຄ້າ ປະຈຳປີ 2026 ຂໍເຊີນບັນດາບໍລິສັດທີ່ມີຄຸນນະວຸດທິທີ່ ເໝາະສົມ ສົນໃຈເຂົ້າຍື່ນຊອງປະມູນ ສຳລັບການສະໜອງເຄື່ອງຮັບໃຊ້ວິຊາສະເພາະ ດັ່ງລຸ່ມນີ້:
   - ປະເພດສານເຄມີ ຂອງສະຖາບັນອຸດສາຫະກຳ, ການຄ້າ ແລະ ພະລັງງານ, ກະຊວງອຸດສາຫະກຳ ແລະ ການຄ້າ ປະຈຳປີ 2026;
   - ເຄື່ອງຮັບໃຊ້ວິຊາສະເພາະ ຂອງກົມທໍລະນີສາດ ແລະ ບໍ່ແຮ່, ກະຊວງອຸດສາຫະກຳ ແລະ ການຄ້າ ປະຈຳປີ 2026;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກຳນົດໄວ້ຢູ່ກົມໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິທີ່ເໝາະສົມສົນໃຈເຂົ້າຮ່ວມການແຂ່ງຂັນການປະມູນ. ສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ຫ້ອງການ (ພະແນກບໍລິຫານ ແລະ ພິທີການ) ເບີໂທຕິດຕໍ່ 020 99 722 047 ແລະ 020 57 718 406 ໃນເວລາລັດຖະການ;
4. ເອກະສານປະມູນແມ່ນເລີ່ມຂາຍ ວັນທີ 01 ຕຸລາ 2026 ຫາ 06 ພະຈິກ 2026. ໃນລາຄາເງິນສົດ ຊອງລະ 3,000,000 ກີບ/ຊອງ (ເງິນຊື້ຊອງປະມູນແມ່ນບໍ່ໄດ້ສົ່ງຄືນ) ແລະ ຈະໄດ້ນຳໃຊ້ເຂົ້າໃນວຽກປະມູນ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:30 ໂມງ ຂອງວັນທີ 06 ພະຈິກ 2026. ຊອງປະມູນທຸກໆຊອງຈະໄດ້ເປີດ ໃນວັນທີ 06 ພະຈິກ 2026 ເວລາ 09:30 ໂມງ ທີ່ຫ້ອງປະຊຸມ ຊັ້ນ 03 ຕຶກA ກະຊວງອຸດສາຫະກຳ ແລະ ການຄ້າ(ສຳນັກງານ ບ້ານ ໂພນໄຊ ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ) ໂດຍຊອງໜ້າຄະນະກຳມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ. ຫາກຊອງປະມູນໃດທີ່ສົ່ງຊ້າກ່ວາເວລາທີ່ກຳນົດໄວ້ແມ່ນຖືວ່າໂມະຄະ, ບໍ່ຮັບເອົາ ແລະ ສົ່ງຄືນທັນທີໂດຍບໍ່ມີການເປີດຊອງອີກຕື່ມ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວຕາມທາງຄອນດ້ວຍ./.

ຫົວໜ້າຫ້ອງການ

ປອ. ບົວລັນ ວິລະວົງ

ພົວພັນປະສານງານ
ທ. ແສງຕາວັນ 020 99722047

Scanned with CamScanner